

# ກອງທຶນຫລຸດຜ່ອນຄວາມທຸກຍາກ

POVERTY REDUCTION FUND

**ພາລະໜ້າທີ່ຂອງ ທລຍ**

ພາລະກິດຂອງ ທລຍ ແມ່ນສະໜອງ ແລະ ສ້າງຄວາມເຂັ້ມແຂງແບບຍືນຍົງໃຫ້ແກ່ທ້ອງຖິ່ນ, ສ້າງຂັ້ນຕອນ ແລະ ລະບົບການພັດທະນາ ໂດຍໃຫ້ສອດຄ່ອງກັບນະໂຍບາຍການແບ່ງຂັ້ນຄຸ້ມ ຄອງ ແລະ ເປົ້າໝາຍການແກ້ໄຂຄວາມທຸກຍາກຂອງລັດຖະບານ.

ຈຸດປະສົງຂອງ ທລຍ:

ປັບປຸງການເຂົ້າເຖິງ ແລະ ການນຳໃຊ້ພື້ນຖານໂຄງລ່າງ ແລະ ການບໍລິການຢູ່ຊຸມຊົນທຸກຍາກໃນເຂດຊົນນະບົດ, ປັບປຸງການພັດທະນາ ທີ່ມີຄວາມຍືນຍົງໂດຍຜ່ານການເຂົ້າຮ່ວມຂອງຊຸມຊົນ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນຢູ່ໃນທຸກຂັ້ນຕອນ ຂອງການພັດທະນາ

**ທລຍ ໄລຍະ I**, ເຊິ່ງໄດ້ຈັດຕັ້ງປະຕິບັດແຕ່ປີ 2002 ຫາ 2011, ໄດ້ບັນລຸຜົນສຳເລັດເປັນຢ່າງດີ ໃນການສະໜອງການບໍລິການຢູ່ເຂດຫ່າງໄກສອກຫຼີກ ຢ່າງວ່ອງໄວ ແລະ ໃນຂອບເຂດກວ້າງຂວາງ.

**ທລຍ ໄລຍະ II** ໄດ້ສະໜັບສະໜູນຂະບວນການວາງແຜນແບບເຮັດແຕ່ລຸ່ມຂຶ້ນເທິງ ແລະ, ມາຮອດທ້າຍ ປີ 2016, ໄດ້ສະໜອງທຶນຊ່ວຍເຫຼືອລ້າ (block grant) ໃຫ້ແກ່ຊຸມຊົນຫລາຍກວ່າ 1.400 ບ້ານຢູ່ເຂດຊົນນະບົດໃນ 44 ເມືອງທຸກຍາກຂອງ 10 ແຂວງ ເພື່ອປັບປຸງພື້ນຖານໂຄງລ່າງທີ່ມີຄວາມຈຳເປັນທີ່ສຸດ ໂດຍແມ່ນຊາວບ້ານເອງເປັນຜູ້ກຳນົດ.

**ທລຍ ໄລຍະ III** ຈະຊຸກຍູ້ການມີສ່ວນຮ່ວມຂອງຊຸມຊົນໃນກຸ່ມເປົ້າໝາຍທັງໝົດຂອງໂຄງການ ເຂົ້າໃນຂະບວນການວາງແຜນ ແລະ ການຕັດສິນໃຈໃຫ້ມີຄວາມຫ້າວຫັນ ແລະ ເຂັ້ມແຂງກວ່າເກົ່າ .

# ກອງທຶນຫລຸດຜ່ອນຄວາມທຸກຍາກ

## ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນລາວ

ນັບແຕ່ໄດ້ສ້າງຕັ້ງຂຶ້ນໃນປີ 2002, ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ຢູ່ບັນດາເມືອງທີ່ທຸກຍາກກວ່າໝູ່ ແລະ ຫ່າງໄກສອກຫຼີກທີ່ສຸດຂອງ ສປປ ລາວ ເພື່ອປະຕິບັດວຽກງານຮ່ວມກັນ ແລະ ປັບປຸງການເຂົ້າເຖິງການບໍລິການ, ພື້ນຖານໂຄງລ່າງ ແລະ ຊັບພະຍາກອນ ສໍາລັບພວກເຂົາ ທີ່ອາດເຮັດໃຫ້ພວກເຂົາສາມາດສ້າງຊີວິດທີ່ດີຂຶ້ນ. ດ້ວຍງົບປະມານຈໍານວນຫຼາຍກວ່າ 110 ລ້ານໂດລາ ສະຫະລັດ, ທລຍ ໄດ້ເປັນໜຶ່ງໃນບັນດາແຜນງານທີ່ພົວພັນກັບຫຼາຍ ຂະແໜງການ ທີ່ໃຫຍ່ທີ່ສຸດຂອງ ສປປ ລາວ ທີ່ສຸມໃສ່ການຫລຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດ.

ທລຍ, ເຊິ່ງໄດ້ສ້າງຕັ້ງຂຶ້ນໂດຍລັດຖະບານຂອງ ສປປ ລາວ ໂດຍການ ສະໜັບສະໜູນຂອງທະນາຄານໂລກ (WB) ແລະ ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງປະເທດສະວິດເຊີແລນ (SDC), ໄດ້ລິເລີ່ມ ແລະ ປັບປຸງຮູບແບບການມີສ່ວນຮ່ວມແບບໃໝ່ ທີ່ດັດປັບໃຫ້ສອດຄ່ອງກັບສະພາບເງື່ອນໄຂຂອງລາວ.

ຮູບແບບຂອງ ທລຍ ໄດ້ພັດທະນາຂີດຄວາມສາມາດຂອງທ້ອງຖິ່ນ, ຕອບສະໜອງຄວາມຮຽກຮ້ອງ ຕ້ອງການດ້ານການພັດທະນາຂອງທ້ອງຖິ່ນ ແລະ ເຮັດໃຫ້ຊຸມຊົນທັງໝົດມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຢ່າງທົ່ວເຖິງ, ໂດຍສະເພາະແມ່ນຜູ້ທຸກຍາກ, ຜູ້ດ້ອຍໂອກາດກວ່າໝູ່ ແລະ ແມ່ຍິງ.

ທາງ ແລະ ຂົວທີ່ສ້າງຂຶ້ນໃໝ່ ໄດ້ເຮັດໃຫ້ຊຸມຊົນທີ່ຢູ່ໂດດດ່ຽວສາມາດເຂົ້າເຖິງຕະຫຼາດ ແລະ ໄດ້ຮັບຜົນປະໂຫຍດຈາກການຄົມມະນາຄົມດີຂຶ້ນ ແລະ ສາມາດເຂົ້າເຖິງຂໍ້ມູນຂ່າວສານໃໝ່ ແລະ ການບໍລິການຂອງລັດຖະບານ. ໂຮງຮຽນ ແລະ ສຸກສາລາໃໝ່ ໄດ້ເປີດໂອກາດໃຫ້ເດັກນ້ອຍໄດ້ຮໍ່າຮຽນ ແລະ ມີອະນາຄົດທີ່ມີສຸຂະພາບດີຂຶ້ນ ແລະ ມີຄວາມອຸດົມສົມບູນຫຼາຍຂຶ້ນ. ການປັບປຸງລະບົບຊົນລະປະທານ, ການຝຶກອົບຮົມທາງດ້ານເຕັກນິກໃໝ່ ໄດ້ເຮັດໃຫ້ຜົນຜະລິດກະສິກໍາ ແລະ ມູນຄ່າຂອງຜະລິດຕະພັນກະສິກໍາເພີ່ມຂຶ້ນ. ຄວາມສະດວກສະບາຍໃນການເຂົ້າເຖິງແຫຼ່ງນໍ້າສະອາດ ໄດ້ປະກອບສ່ວນເຮັດໃຫ້ຊີວິດີ ແລະ ສຸຂະພາບດີຂຶ້ນ ທັງເຮັດໃຫ້ມີເວລາເພື່ອເຮັດກິດຈະກໍາການຜະລິດອື່ນໆ.

ຜົນສໍາເລັດທີ່ສໍາຄັນທີ່ສຸດຂອງ ທລຍ ແມ່ນມີຫຼາຍກວ່າຈໍານວນຂົວ, ຈຸດແຫຼ່ງນໍ້າ, ໂຮງຮຽນ ແລະ ສຸກສາລາທີ່ໄດ້ກໍ່ສ້າງຂຶ້ນ ຫຼື ຈໍານວນກິໂລແມັດ ຂອງເສັ້ນທາງທີ່ປັບປຸງ. ມັນແມ່ນການຊ່ວຍໃຫ້ອໍານາດການປົກຄອງທ້ອງຖິ່ນ ແລະ ສະມາຊິກຊຸມຊົນ ໄດ້ຮ່ວມກັນປະຕິບັດວຽກງານ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນທຸກຍາກ ຈໍານວນຫຼາຍແສນຄົນ ໃນເຂດຊຸມຊົນ ຊົນນະບົດ ແລະ ຫ່າງໄກສອກຫຼີກ ໃຫ້ດີຂຶ້ນກວ່າເກົ່າ.

ຂະບວນການພັດທະນາຊຸມຊົນແບບມີສ່ວນຮ່ວມ ໄດ້ອໍານວຍຄວາມສະດວກໃຫ້ແກ່ການຮ່ວມມື ແລະ ການປະສານງານກັບອົງການອື່ນໆ ແລະ ກັບອໍານາດການປົກຄອງທ້ອງຖິ່ນ. ດ້ວຍການປະສົມປະສານກັນ, ພວກເຂົາໄດ້ສ້າງຄວາມເຊື່ອໝັ້ນ ແລະ ຄວາມມຸ້ງໝັ້ນຂອງຊຸມຊົນ - ເຊິ່ງສະແດງອອກບໍ່ສະເພາະແຕ່ໃນການມີສ່ວນຮ່ວມຂອງພວກເຂົາເທົ່ານັ້ນ, ແຕ່ຍັງສະແດງອອກໃນຄວາມເຕັມໃຈປະກອບສ່ວນດ້ານຊັບພະຍາກອນທີ່ມີຈໍາກັດຂອງພວກເຂົາ ເພື່ອສິ່ງທີ່ດີຂຶ້ນກວ່າເກົ່າ.




### PRF III: 2016-2012

**ການພັດທະນາທີ່ຖືກຂັບເຄື່ອນໂດຍຊຸມຊົນແບບເລິກຊຶ່ງ**

ເພື່ອໃຫ້ໄດ້ຮັບການເຂົ້າຮ່ວມຢ່າງຫ້າວຫັນໃນລະດັບທີ່ສູງຂຶ້ນອີກຂອງບັນດາ ກຸ່ມຄົນທີ່ຍັງມີຄວາມອ່ອນແອ, ວິທີການ ພັດທະນາແບບຂັບເຄື່ອນໂດຍຊຸມຊົນ (CDD) ແບບເລິກຊຶ່ງຈະໄດ້ຖືກນຳໃຊ້ເປັນວິທີການຫລັກໃນ PRF III:

» ມີເຄື່ອງມືການວາງແຜນແບບມີສ່ວນຮ່ວມທີ່ຫລາຍກວ່າເກົ່າ
» ຈັດຈ້າງຜູ້ປະສານງານລະດັບກຸ້ມບ້ານແມ່ຍິງເພີ້ມຕື່ມ
» ນຳໃຊ້ຊຸມຊົນໃນການສ້າງເປົ້າໝາຍລະດັບຄວາມທຸກຍາກຂອງ ຄົວເຮືອນ ແລະ ຜົນປະໂຫຍດຂອງການຕິດຕາມ.




### PRF FUNDING

| | | | |
|---|---|---|---|
| ທລຍ ໄລຍະ I (2002-2008) | 20 ລ້ານ US$ | ການຕໍ່ໄລຍະ (2008-2010) | 22.71 ລ້ານ US$ |
| ທລຍ ໄລຍະ II (2011-2016) | 68.7 ລ້ານ US$ | ການຕໍ່ໄລຍະ | 19.6 ລ້ານ US$ |
| PRF III | 54 ລ້ານ US$ | | |

## ຫລຍ ໄລຍະ I

| | |
|---|---|
| **3,179** | ໂຄງການຍ່ອຍ |
| **>250,000** | ຄົນທີ່ໄດ້ຮັບຜົນປະໂຫຍດຕໍ່ປີ |
| **2,000** | ບ້ານທີ່ໄດ້ຮັບຜົນປະໂຫຍດ |
| **56** | ຂົວ |
| **>3,000km** | ທາງຊົນນະບົດ |
| **156** | ລະບົບຊົນລະປະທານ |
| **669** | ລະບົບນໍ້າສະອາດ |
| **65** | ສຸກສາລາ |
| **616** | ໂຮງຮຽນ |

## ຫລຍ ໄລຍະ II

| | |
|---|---|
| **1,931** | ໂຄງການຍ່ອຍ |
| **$196,834** | ການຈັດສັນງົບປະມານສະເລ່ຍ ໃຫ້ແຕ່ລະກຸ່ມບ້ານ |
| **>320,000** | ຜູ້ທີ່ສາມາດເຂົ້າເຖິງລະບົບນໍ້າສະອາດ |
| **451** | ໂຮງຮຽນທີ່ໄດ້ກໍ່ສ້າງ ຫຼື ຟື້ນຟູຄືນ |
| **>1,400km** | ເສັ້ນທາງທີ່ໄດ້ຮັບການປັບປຸງ |
| **134** | ໂຄງການຍ່ອຍດ້ານກະສິກຳ, ປ່າໄມ້ ແລະ ພະລັງງານ |
| **78** | ໂຄງການຍ່ອຍດ້ານ ສາທາລະນະສຸກ |
| **100%** | ຫຼັກຖານການຈັດກອງປະຊຸມ ວາງວິໄສທັດຂັ້ນບ້ານ |
| **67%** | ມີຄວາມອາດສາມາດ ເຂົ້າເຖິງນໍ້າສະອາດ |
| **95%** | ໂຄງການຍ່ອຍທີ່ປະຕິບັດຕາມມາດຕະການປົກປ້ອງຜົນກະທົບດ້ານສິ່ງແວດລ້ອມແລະສັງຄົມ |





ຊີວິດມີຄວາມສະດວກ
ສະບາຍດີຂຶ້ນ ຍ້ອນມີ
ເຄື່ອງປໍ້ານໍ້າອັນໃໝ່ນີ້. ຕອນມີ
ເຄື່ອງປໍ້ານໍ້າດ້ວຍມືອັນເກົ່າ, ຕ້ອງໄດ້ໃຊ້ເວລາ
10 ນາທີ ເພື່ອໃຫ້ໄດ້ນໍ້າເຕັມຄຸໜຶ່ງ,
ດຽວນີ້ ໄດ້ໃຊ້ເວລາພຽງແຕ່ 2 ນາທີ.
ຂ້ອຍຍັງຕ້ອງໄດ້ຫາບຄຸນໍ້ານີ້ ໄປເຮືອນຂອງຂ້ອຍຢູ່,
ແຕ່ຢ່າງໜ້ອຍ ຂ້ອຍກໍບໍ່ໄດ້ໜີ
ປະລູກນ້ອຍຂອງຂ້ອຍໄວ້ດົນຫຼາຍ.

**ນາງ ອາແລວ,**
**ຊາວບ້ານ.**





ໂຮງຮຽນ ແມ່ນບູລິມະສິດສຳລັບບ້ານຂອງພວກເຮົາ. ພວກເຮົາຕ້ອງການ ຫ້ອງຮຽນເພີ່ມຕື່ມ. ໃນເມື່ອກ່ອນ, ຫ້ອງຮຽນຫ້ອງໜຶ່ງມີ 65 ຄົນ. ປະຈຸບັນ, ຫ້ອງໜຶ່ງມີນັກຮຽນ 25 ຄົນ. ແຕ່ກ່ອນ, ພວກເຮົາມີໂຕະໜຶ່ງສຳລັບ 4 ຄົນ; ປະຈຸບັນ, ມີນັກຮຽນ 2 ຄົນ ຕໍ່ໂຕະໜຶ່ງອັນ. ສະມາຊິກຊຸມຊົນຂອງພວກເຮົາຈຳນວນສິບຄົນ ໄດ້ຊ່ວຍສ້າງຫ້ອງຮຽນໃໝ່ດັ່ງກ່າວ. ໝົດທຸກຄົນໃນບ້ານມີຄວາມດີໃຈເພາະວ່າ ດຽວນີ້ ພວກເດັກນ້ອຍຢາກໄປໂຮງຮຽນ.

**ທ່ານ ຄຳມາ ດອນໂຄເຊ**
**ນາຍບ້ານ**







ແຕ່ກ່ອນ, ໂຕະຕັ່ງແມ່ນເຮັດດ້ວຍໄມ້ໄຜ່ ແລະ ມັນເຄີຍປາດກົ້ນຂ້ອຍ. ຂ້ອຍບໍ່ຢາກມາໂຮງຮຽນ. ແຕ່ດຽວນີ້, ຂ້ອຍມັກມາໂຮງຮຽນ. ຫ້ອງຮຽນຂອງພວກຂ້ອຍງາມຫຼາຍ. ດຽວນີ້, ນ້ອງສາວ ຂອງຂ້ອຍກໍມານຳຂ້ອຍ - ລາວຮຽນຢູ່ໂຮງຮຽນອະນຸບານຫຼັງໃໝ່.

**ນາງນ້ອຍ ສີສຸລາດ,**
**ນັກຮຽນ**





ກ່ອນການກໍ່ສ້າງ ເຮືອນພັກໃໝ່ນີ້, ນາງພະຍາບານສອງຄົນ ແລະ ຂ້ອຍເອງ ໄດ້ນອນຢູ່ສຸກສາລາໃນເວລາກາງຄືນ ຢູ່ນຳພວກຄົນເຈັບ. ໃນຊຸມຊົນນີ້, ແມ່ຍິງບໍ່ໄດ້ອອກລູກຢູ່ເຮືອນ  ແຕ່ກ່ອນ, ພວກເຂົາໄປອອກລູກຢູ່ປ່າ, ແຕ່ດຽວນີ້ ພວກເຂົາມາຢູ່ຄ້າງຄືນຢູ່ສຸກສາລານີ້ ທີ່ມີ 6 ຕຽງນອນ.

ແຕ່ລະເດືອນ, ມີຜູ້ມາອອກລູກນຳພວກຂ້ອຍ ປະມານ 4 ຫາ 7 ຄົນ ແລະ ມີຫຼາຍກວ່າ 10 ຄົນ ໃນເດືອນກໍລະກົດ ແລະ ເດືອນສິງຫາ.  ສະນັ້ນ, ການຢູ່ອາໄສແບບນີ້ ແມ່ນມີຄວາມຫຍຸ້ງຍາກ. ສ່ວນທ່ານໝໍຜູ້ຊາຍ ກໍໄປພັກຢູ່ບ້ານທີ່ຫ່າງໄກຈາກນີ້ 20 ກິໂລແມັດ. ໃນປະຈຸບັນນີ້, ພວກຂ້ອຍໝົດທຸກຄົນອາໄສ ຢູ່ເຮືອນພັກນີ້, ແຕ່ລະຄົນມີຫ້ອງຂອງຕົນເອງ.

**ທ່ານ ນາງ ທິບພະກອນ,**
**ແພດຜະດຸງຄັນ.**




## ທລຍ ໄລຍະ III: ການສ້າງແຜນງົບປະມານ ແລະ ການຕັດສິນໃຈ ຂອງຊຸມຊົນ

ການຈັດສັນງົບປະມານປະຈຳປີສະເລ່ຍ ຈຳນວນ 44.000 ໂດລາສະຫະລັດ ໄດ້ສະໜອງໃຫ້ແກ່ກຸ່ມບ້ານທີ່ເປັນເປົ້າໝາຍຂອງ ທລຍ ໄລຍະ II, ເຊິ່ງມູນຄ່າການລົງທຶນສະເລ່ຍທັງໝົດຕໍ່ກຸ່ມບ້ານແມ່ນ 130.000 ໂດລາສະຫະລັດ ສຳລັບໄລຍະ 3 ປີ ໂດຍໂຄງການຍ່ອຍໄດ້ຮັບທຶນ ແລະ ຈັດຕັ້ງປະຕິບັດເປັນແຕ່ລະປີ. ໂຄງການຍ່ອຍໄດ້ຖືກຄັດເລືອກ ສຳລັບການສະໜັບສະໜູນທຶນ ຢູ່ຂັ້ນກຸ່ມບ້ານ ໂດຍຄະນະກຳມະການ ທລຍ ຂັ້ນກຸ່ມບ້ານ (ທີ່ປະກອບດ້ວຍຊາວບ້ານທີ່ໄດ້ຮັບເລືອກຕັ້ງ ລວມທັງແມ່ຍິງ ແລະ ກຸ່ມຊົນເຜົ່າ). ພະນັກງານ ທລຍ ປະຈຳເມືອງ, ອຳນາດການປົກຄອງເມືອງ ແລະ ພະນັກງານຂອງຂະແໜງການ ໄດ້ໃຫ້ການຢັ້ງຢືນທາງດ້ານວິຊາການແກ່ບົດສະເໜີໂຄງການຍ່ອຍ. ການຕັດສິນຂັ້ນສຸດທ້າຍ ສຳລັບການສະ ໜອງທຶນແກ່ໂຄງການຍ່ອຍ ໄດ້ປະຕິບັດຢູ່ຂັ້ນກຸ່ມບ້ານ ໂດຍຄະນະກຳມະການ ທລຍ ຂັ້ນກຸ່ມບ້ານ ໂດຍອີງໃສ່ເງື່ອນໄຂ ແລະ ຂັ້ນຕອນທີ່ໂປ່ງໃສ.